**ມິຊຊາອາທິດທີ 23 ກຳນົດທຳມະດາ**

**ວັນທີ 4 ກັນຍາ 2022**



**ພຣະວໍລະສານໂດຍນັກບຸນລູກາ 14, 25-33**

ໃນເວລານັ້ນ, ມີຝູງຊົນຫລວງຫລາຍຕິດຕາມພຣະເຢຊູເຈົ້າໄປ ພຣະອົງຈຶ່ງຫັນມາກ່າວວ່າ: ຖ້າຜູ້ໃດຕິດຕາມເຮົາມາໂດຍຍັງຮັກພໍ່ແມ່, ເມຍ, ລູກເຕົ້າ, ອ້າຍເອື້ອຍນ້ອງແລະຈົນຮອດຊີວິດຂອງຕົວເອງຜູ້ນັ້ນບໍ່ອາດເປັນລູກສິດຂອງເຮົາໄດ້. ຜູ້ໃດບໍ່ຍອມແບກກາງເຂນຂອງຕົນແລະເດີນຕາມເຮົາມາຜູ້ນັ້ນກໍບໍ່ອາດເປັນລູກສິດຂອງເຮົາໄດ້.

ຕາມຈິງແລ້ວມີໃຜໃນພວກເຈົ້າຖ້າເຂົາຢາກສ້າງຫໍຄອຍຫລັງໜຶ່ງຈະບໍ່ນັ່ງລົງແລະຄຳນວນຄ່າໃຊ້ຈ່າຍເພື່ອຮູ້ວ່າຕົວມີຫຍັງພໍສ້າງໃຫ້ສຳເລັດໄດ້ຫລືບໍ່? ຢ້ານວ່າເມື່ອລົງຮາກແລ້ວແລະບໍ່ສາມາດສ້າງໃຫ້ສຳເລັດໄດ້ທຸກຄົນທີ່ເຫັນກໍຈະຫົວຂວັນເຂົາເວົ້າວ່າ: ຈົ່ງເບິ່ງຄົນຜູ້ນີ້ໄດ້ລົງມືສ້າງແຕ່ບໍ່ສາມາດສ້າງໃຫ້ສຳເລັດໄດ້!

ຫລືອີກຢ່າງໜຶ່ງມີກະສັດອົງໃດບໍທີ່ຈະທຳເສິກກັບກະສັດອີກອົງໜຶ່ງຈະບໍ່ນັ່ງຄິດຕຶກຕອງວ່າ ຕົນມີທະຫານສິບພັນຄົນຈະສາມາດຕໍ່ສູ້ກັບຜູ້ມີຊາວພັນຄົນໄດ້ຫລືບໍ່? ບໍ່ດັ່ງນັ້ນ ເພິ່ນກໍຮີບສົ່ງຄະນະທຳມະທູດໄປທຳສັນຍາສັນຕິພາບແຕ່ເວລາສັດຕູຍັງຢູ່ໄກ.

ດັ່ງດຽວກັນ, ຜູ້ໃດໃນພວກເຈົ້າທີ່ບໍ່ຍອມສະລະຊັບສິນທັງໝົດຂອງຕົນ ຜູ້ນັ້ນກໍບໍ່ອາດເປັນລູກສິດເຮົາໄດ້ດ້ວຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ເງື່ອນໄຂການເປັນສິດຜູ້ຕິດຕາມພຣະເຢຊູເຈົ້າຊຶ່ງພວກເຮົາຟັງວັນນີ້ເບິ່ງຄືຂັດແຍ່ງກັບສິ່ງທີ່ພວກເຮົາໄດ້ຮຽນຮູ້ຈາກພຣະທຳບັນຍັດກໍຄືຈາກປະສົບການຊີວິດກ່ຽວກັບຄວາມກະຕັນຍູຮູ້ຄຸນ. ເພາະພຣະເຢຊູເຈົ້າກ່າວວ່າ: “ ຖ້າຜູ້ໃດຕິດຕາມພຣະອົງໄປໂດຍຍັງຮັກພໍ່ແມ່, ເມຍ, ລູກເຕົ້າ, ອ້າຍເອື້ອຍນ້ອງແລະຈົນຮອດຊີວິດຂອງຕົວເອງຜູ້ນັ້ນບໍ່ອາດເປັນສິດຂອງພຣະອົງໄດ້”. ຄວາມຜູກພັນກັບຄອບຄົວ, ພໍ່ແມ່, ອ້າຍເອື້ອຍນ້ອງເປັນເລື່ອງທຳມະຊາດແລະເປັນສິ່ງທີ່ດີ. ແລະໃນພຣະບັນຍັດສິບປະການກໍສອນພວກເຮົາໃຫ້ນັບຖືບິດາມານດາຂອງຕົນ. ຄວາມຮັກທີ່ມີຕໍ່ອ້າຍເອື້ອຍນ້ອງແລະຜູ້ອື່ນຄືຮັກຕົວເອງນັ້ນກໍເປັນສິ່ງທີ່ພຣະເຢຊູເຈົ້າບອກສອນພວກເຮົາເຊັ່ນດຽວກັນ. ແຕ່ເປັນຫຍັງການກະທຳດັ່ງກ່າວຈຶ່ງຂັດກັບການເປັນສິດຂອງພຣະອົງ? ຄຳຕອບຂອງຄຳຖາມນີ້ອາດຈະຢູ່ໃນຄຳປຽບທຽບຊຶ່ງພຣະເຢຊູເຈົ້າໃຊ້ວັນນີ້ ນັ້ນຄືການຄິດຕຶກຕອງກ່ອນການກະທຳ ບໍ່ວ່າຈະເປັນການສ້າງຫໍຄອຍຫລືການທຳເສິກສົງຄາມ. ທັງສອງຢ່າງນີ້ລ້ວນແຕ່ຕ້ອງຄິດຄຳນວນຢ່າງດີ.

ແຕ່ການຄິດຕຶກຕອງໃນການເປັນສິດພຣະເຢຊູເຈົ້າພັດກົງກັນຂ້າມກັບການຄິດຄຳນວນແບບປາສາມະນຸດ ເພາະການເດີນຕາມພຣະເຢຊູເຈົ້າບໍ່ແມ່ນເພື່ອຜົນປະໂຫຍດສ່ວນຕົວ, ແຕ່ເພື່ອຄົນອື່ນ. ດ້ວຍເຫດນີ້ຜູ້ເປັນສິດພຣະເຢຊູເຈົ້າຕ້ອງສະລະທຸກຢ່າງແມ່ນກະທັ້ງຊີວິດຕົວເອງ. ດັ່ງຄຳສະຫລຸບຂອງພຣະເຢຊູເຈົ້າໃນຕອນທ້າຍຂອງພຣະວໍລະສານວັນນີ້ວ່າ: “ຜູ້ໃດໃນພວກເຈົ້າທີ່ບໍ່ຍອມສະລະຊັບສິນທັງໝົດຂອງຕົນ ຜູ້ນັ້ນກໍບໍ່ອາດເປັນລູກສິດຂອງເຮົາໄດ້”. ຊັບສິນທັງໝົດຂອງຕົນໃນທີ່ນີ້ແມ່ນລວມໄປເຖິງຊີວິດຂອງຕົວເອງ. ສິ່ງນີ້ບໍ່ແມ່ນສິ່ງແປກໃໝ່ໃນພຣະກຣິສຕະຈັກ, ຍ້ອນພຣະເຢຊູເຈົ້າຜູ້ໄດ້ຖືກສົ່ງມາໃນໂລກນີ້ບໍ່ແມ່ນເພື່ອທຳຕາມນ້ຳພຣະໄທຂອງພຣະອົງ, ແຕ່ເພື່ອທຳໃຫ້ມະນຸດມີຊີວິດດ້ວຍການສະລະຊີວິດຂອງພຣະອົງເອງ. ແລະບັນດາອັກຄະສາວົກຜູ້ຕິດຕາມພຣະເຢຊູເຈົ້າໄປກໍເຊັ່ນດຽວກັນ, ພວກເຂົາກໍໄດ້ສະລະຊີວິດຂອງຕົນເພື່ອເປັນພິຍານເຖິງພຣະນາມຂອງພຣະອົງ. ຈາກນັ້ນກໍມີບັນດາມໍລະນາສັກຂີຜູ້ເປັນພິຍານຢືນຢັນເຖິງຄວາມເຊື່ອຈົນຕ້ອງສະລະຊີວິດຂອງຕົນເອງ. ແບບຢ່າງເຫລົ່ານີ້ທຳໃຫ້ພວກເຮົາເຂົ້າໃຈເຖິງເງື່ອນໄຂການເປັນສິດຕິດຕາມພຣະເຢຊູເຈົ້າຊຶ່ງພຣະອົງກ່າວວັນນີ້.

**ພາວະນາ**

ໂອພຣະເຢຊູເຈົ້າ, ໂຜດຊ່ວຍລູກໃຫ້ຮູ້ຈັກລືມຕົວເອງແລະຄິດຫາຜູ້ອື່ນ. ເພື່ອລູກຈະໄດ້ສົມເປັນສິດຂອງພຣະອົງ ຜູ້ຊົງຮັກລູກແລະມະນຸດທຸກຄົນດ້ວຍການສະລະຊີວິດຂອງພຣະອົງເອງນັ້ນແລ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ